VILAVAN et al. (2022). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 8. Issue 1. Jan – Jun 2022. Page 154 - 161

# ການບໍລິຫານວັດວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ

**ພຣະຄູນຕາ ວິລະວັນ[1], ພູວົງ ໜໍ່ດາລາ[2], ສີທົນ ສີສົມບັດ, ບຸນຈັນ ແກ້ວມະນີຄະ ແລະ ທອງສີ ຊິວມໍລີ**

*ວັດວຽງຈະເລີນ ບ້ານ ວຽງຈະເລີນ ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ, ສປປ ລາວ*

*[2] **ຕິດຕໍ່ພົວພັນ:** ພູວົງ ໜໍ່ດາລາ, ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ, Tel: +856 20 2980 7672, E-mail: nordala1982@gmail.com*

*[1] ວັດວຽງຈະເລີນ ບ້ານວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ*

*[2] ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ,*

*[3] ຫໍສະໝຸດ ມະຫາວິທະຍາໄລ ສຸພານຸວົງ*

*ຂໍ້ມູນບົດຄວາມ:*

*ການສົ່ງບົດຄວາມ: 16 ກັນຍາ 2021*

*ປັບປຸງສຳເລັດ: 21 ມີນາ 2022*

*ການຕອບຮັບ: 26 ເມສາ 2022*

**ບົດຄັດຫຍໍ້**

ການຄົ້ນຄວ້າເລື່ອງ ການບໍລິຫານວັດວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ມີຈຸດປະສົງ ຄື: 1) ເພື່ອສຶກສາສະພາບການບໍລິຫານວັດ ວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ, 2) ເພື່ອປຽບທຽບຄວາມຄິດເຫັນຂອງປະຊາຊົນ ຕໍ່ການບໍລິຫານວັດ ໂດຍຈຳແນກຕາມເພດ, ອາຍຸ, ລະດັບການສຶກສາ ແລະ ອາຊີບ ແລະ 3) ເພື່ອສຶກສາຫາແນວທາງການປັບປຸງໃນການບໍລິຫານວັດ ວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ. ການຄົ້ນຄວ້າແມ່ນເປັນລັກສະນະການສຳຫຼວດ ແລະ ກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄວ້າທັງໝົດ 350 ຄົນ, ເຄື່ອງມືທີ່ໃຊ້ເປັນແບບສອບຖາມແບບມາດຕາສ່ວນ 5 ລະດັບ ແລະ ແບບສຳພາດ. ການວິເຄາະຂໍ້ມູນ ແມ່ນນຳໃຊ້ໂປຣແກຣມສຳເລັດຮູບ ເພື່ອຫາຄ່າ ຄວາມຖີ່ (Frequency), ເປີເຊັນ (Percentage), ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຖານ (Standard Deviation) ແລະ ການທົດສອບແບບ t-test ແລະ F-test ໂດຍວິເຄາະຄວາມຜັນປ່ຽນທາງດຽວ (one-way ANOVA).

ຜົນການສຶກສາພົບວ່າ ປະຊາຊົນມີຄວາມຄິດເຫັນຕໍ່ກັບ ສະພາບການບໍລິຫານວັດວຽງຈະເລີນ ໂດຍລວມແລ້ວ ແມ່ນປະຕິບັດໄດ້ດີຫຼາຍ, ຜົນການປຽບທຽບຄວາມຄິດເຫັນຂອງປະຊາຊົນ ຕໍ່ການບໍລິຫານວັດວຽງຈະເລີນ ໂດຍຈຳແນກຕາມຂໍ້ມູນສ່ວນຕົວ ເຊັ່ນ: ເພດ, ອາຍຸ, ລະດັບການສຶກສາ ແລະ ອາຊີບ ພົບວ່າ ມີຄວາມຄິດເຫັນແຕກຕ່າງກັນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ແລະ ແນວທາງໃນການປັບປຸງການບໍລິຫານວັດ ວຽງຈະເລີນ ໂດຍລວມແມ່ນ ການບໍລິຫານວັດດ້ານການປົກຄອງຄວນມີການກະຈາຍອຳນາດການປົກຄອງໄປຍັງຜູ້ທີ່ມີສ່ວນຮ່ວມໃນການປົກຄອງ ເພື່ອເຮັດໃຫ້ການບໍລິຫານວັດ ແລະ ການປົກຄອງມີປະສິດທິພາບຫຼາຍຂຶ້ນ, ມີການປະຊຸມຮ່ວມກັນທຸກຝ່າຍ ທັງພຣະ ແລະ ປະຊາຊົນ ແລະ ຊ່ວຍກັນແກ້ໄຂບັນຫາທີ່ເກີດຂຶ້ນ ເປັນການສ້າງສຳພັນອັນດີລະຫວ່າງວັດ ແລະ ບ້ານ ໃຫ້ມີຄວາມສະໝານສະມັກຄີຕໍ່ກັນ, ຄວນມີນະໂຍບາຍ ແຜນຜັງຂອງວັດເພື່ອບົ່ງບອກເຖິງໜ້າທີ່ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບຂອງບຸກຄະລາກອນຢ່າງຈະແຈ້ງ. ຄວນສົ່ງເສີມທຶນການສຶກສາໃຫ້ກັບພຣະສົງ-ສຳມະເນນທີ່ມີຄວາມຕັ້ງໃຈຮຽນທັງທາງໂລກແລະ ທາງທຳ ຄຽງຄູ່ກັນໄປຕາມຄວາມເໝາະສົມ ເພື່ອຈະໄດ້ເປັນບຸກຄະລາກອນທີ່ສຳຄັນໃນຂ້າງໜ້າ. ຄວນເປີດຫຼັກສູດໃນການອົບຮົມ ແລະ ເຜີຍແຜ່ພຣະພຸດທະສາດສະໜາໃຫ້ພຣະສົງ-ສຳມະເນນພາຍໃນວັດ ແລະ ສະຖານທີ່ຕ່າງໆໃຫ້ທົ່ວເຖິງ. ຄວນຈັດໃຫ້ມີການສະແດງພຣະທຳມະເທດສະໜາ ແລະ ວິປັດສະນາກຳມະຖານ ການບັນຍາຍທຳມະ ຫຼື ປາຖະຄາຖາ. ການກໍ່ສ້າງ ແລະ ບູລະນະປະຕິສັງຂອນສິ່ງກໍ່ສ້າງ ແລະ ຊັບສົມບັດຂອງວັດ ຄວນມີການຮັກສາ, ສ້ອມແປງປັບປຸງ ຕົກແຕ່ງສາດສະໜາວັດຖຸ ແລະ ສາດສະໜາສະຖານ ທີ່ມີຢູ່ແລ້ວໃຫ້ໝັ້ນຄົງຖາວອນ ແລະ ການກໍ່ສ້າງເພີ່ມເຕີມໃຫ້ເໝາະສົມລະປະແລະວັດທະນະທຳຂອງຊາດ ແລະ ຄວນສ້າງເທົ່າທີ່ຈຳເປັນຕໍ່ການຄົງໄວ້ແຫ່ງສາດສະໜາຕໍ່ໄປ.

**ຄຳສັບສຳຄັນ:** *ການບໍລິຫານ*

VILAVAN et al. (2022). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 8. Issue 1. Jan – Jun 2022. Page 154 - 161

# The Management of Viengchalern Temple, Xaysetha District, Vientiane Capital

**Monk khounta VILAVAN[1], Phouvong NORDALA, Sithonh SISOMBATH, BOUNCHANH KEOMANYKA and Thongsy XUAMOLEE**

*Viengchalern Temple, Xaysetha District, Vientiane Capital, Lao PDR*

[1]***Correspondence:*** Phouvong NORDALA, *Department of Language Pedagogy, Faculty of Education, Souphanouvong University, Tel: +856 20 2980 7672, E-mail: nordala1982@gmail.com*

***Article Info:***
*Submitted: Sep 16, 2021*
*Revised: Mar 21, 2022*
*Accepted: Apr 26, 2022*

**Abstract**

The main objectives of this research entitled "The management of Viengchalern temple, Xaysettha district, Vientiane capital" are (1) to study the management of Viengchalern temple, (2) to compare the the management of Viengchalern temple in the general opinions of the people and (3) to study the problems, obstacles and guidelines of the people toward the management of Viengchalern temple, through the survey research. This research was conducted by a survey of 350 people using cluster sampling. The five levels questionnaires were used to collect data for this study. The questionnaires were divided into two sections. The first section had data from open questions, and the second section contained data from closed questionnaires about people's opinions toward the management of Viengchalern temple. For data collection, a rating scale and an open-structured questionnaire with a reliability value of 0.943 were utilized. The data was analyzed using frequencies, percentages, averages, standard deviations, t-tests, f-tests, and one-way analysis of variance, and the one-way anova was compared.

The results of this research found that people have an opinion on the management of Vat Vieng Chaleun as a whole at many levels and each aspect at many levels, the results of comparing the opinions of the people on the administration of Vat Viengchaleun were classified according to their personal status by sex, age, education level and occupation. It was found that there were statistically significant differences at the level of 0.05, and Guidelines for improving the administration of Viengchaleun Temple as a whole: The administration of the temple should be decentralized to those involved in the administration to make the administration of the temple and the administration more efficient, there should be a meeting of all parties, both monks and people, and help each other to build a good relationship. There should be a policy of the temple plan to clearly indicate the positions and responsibilities of the personnel. Scholarships should be promoted for monks and nuns who are willing to study both secularly and religiously, as appropriate, in order to become important personnel in the afterlife. Courses should be opened for the training and dissemination of Buddhism to monks and nuns within temples and other places. There should be performances of sermons and commentary on the basis of sermons or lectures. The construction and restoration of the building and property of the temple should be the maintenance, repair and decoration of the existing material walls and monuments to make them permanent and additional construction to suit the national art and culture and should be built as necessary for the preservation of the temple.

**Keyword**: *Administration*

VILAVAN et al. (2022). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 8. Issue 1. Jan – Jun 2022. Page 154 - 161

## 1. ຄວາມເປັນມາ ແລະ ຄວາມສຳຄັນການວິໄຈ

ພຣະພຸດທະສາດສະໜາ ເປັນສາດສະໜາທີ່ເກົ່າແກ່ສາດສະໜາໜຶ່ງ ໃນບັນດາສາດສະໜາທັງຫຼາຍໃນໂລກ ແລະ ມີປະຫວັດສາດອັນຍາວນານ, ມີຄວາມເຕີບໃຫຍ່ຂະຫຍາຍຕົວ ແລະ ສະໜິດຕິດພັນກັບປະຫວັດສາດຂອງຊາດລາວ ມາຕັ້ງແຕ່ສະໄໝບູຮານນະການ ແລະ ຍຶດຖືເປັນແນວທາງໃນການສຶກສາອົບຮົມສັ່ງສອນ ແກ່ຜູ້ທີ່ນັບຖືພຸດທະສາດສະໜາ ໃຫ້ຮູ້ ແລະ ເຂົ້າໃຈໃນດ້ານຄຳພີດີກາ, ຮີດຄອງ, ປະເພນີ ແລະ ວັດທະນະທຳທາງພຸດທະສາດສະໜາ; ພ້ອມກັນນັ້ນກໍ່ໄດ້ຈັດຕັ້ງໃຫ້ມີໂຮງຮຽນສອນສິລະທຳ, ທຳມະກະທຶກ ແກ່ພຣະສົງ-ສາມະເນນ, ພໍ່ແມ່ປະຊາຊົນລາວບັນດາເຜົ່າ ເພື່ອເຮັດໃຫ້ເຂົາເຈົ້າໄດ້ຮຽນຮູ້ ແລະ ເຂົ້າໃຈຢ່າງທ່ອງແທ້ຕໍ່ຫຼັກທຳຄຳສອນຂອງພຣະພຸດທະເຈົ້າ ແລະ ສາມາດນຳໄປໃຊ້ເຂົ້າກັບຊີວິດຕົວຈິງຂອງຕົນໄດ້. ໃນຂະນະດຽວກັນນັ້ນ ກໍ່ໄດ້ມີການສົ່ງເສີມ, ສະໜັບສະໜູນ ພຣະສົງ-ສາມະເນນ ອອກເທສະໜາສັ່ງສອນນຳພາພໍ່ແມ່ປະຊາຊົນລາວບັນດາເຜົ່າ ປະຕິບັດສິລະທຳກຳມະຖານ ເພື່ອໃຫ້ເຂົາເຈົ້າເປັນຄົນດີມີສິນທຳ, ເປັນສາສະນິກະຊົນທີ່ດີຂອງພຣະສາດສະໜາ, ເປັນຄົນດີຂອງຊາດ ເພື່ອນຳພາປະເທດຊາດກ້າວຂຶ້ນສູ່ຄວາມຈະເລີນຮຸ່ງເຮືອງເຫຼືອງເຫຼື້ອມສືບຕໍ່ໄປ (ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດສະໄໝທີ VI, 2016)

ພຣະສົງລາວ ມີບົດບາດສຳຄັນຕໍ່ຊາດ ແລະ ຍາດໂຍມຄົນລາວບັນດາເຜົ່າ ທັງໃນອະດີດ ແລະ ປະຈຸບັນ ປະຫວັດສາດລາວໄດ້ເວົ້າເຖິງວິລະກຳຂອງພຣະພຸດທະສາດສະໜາ ເຊິ່ງພຣະສົງລາວໄດ້ອຸທິດກຳລັງກາຍ, ຈິດໃຈ, ພູມປັນຍາ ແລະ ຊີວິດປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ທັງໃນຍາມສົງຄາມ ແລະ ຍາມປະເທດມີສັນຕິພາບ ເອກະລາດ ແລະ ເອກະພາບ ທົ່ວພື້ນແຜ່ນດິນລາວ. ວິລະກຳປະຫວັດສາດອັນພົ້ນເດັ່ນ ທີ່ພຣະສົງລາວໄດ້ສ້າງມາ ແມ່ນເລີ່ມແຕ່ສະໄໝຣາຊະການຂອງພຣະເຈົ້າຟ້າງຸ່ມມະຫາຣາດ, ອົງພຣະມະຫາກະສັດລາວທີ່ອົງອາດກ້າແກ່ນ ແລະ ສະຫຼາດປາດເປື້ອງ, ທັງເປັນພຸດທະສາສະນິກະຊົນ (ອຸປາສົກ) ທີ່ແທ້ຈິງ, ພຣະອົງໄດ້ນຳເອົາພຣະພຸດທະສາດສະໜານິກາຍເຖລະວາດມາສູ່ດິນແດນແຫ່ງອານາຈັກລາວລ້ານຊ້າງ ໃນປີ ພສ 1902, ຄສ 1359 ແລະ ສືບທອດມາເຖິງປະຈຸບັນ. ພຣະສົງລາວໄດ້ນຳສິລະທຳທາງພຣະພຸດທະສາດສະໜາ ສິດສອນໃຫ້ຍາດໂຍມລາວບັນດາເຜົ່າເຂົ້າໃຈເລິກເຊິ່ງຕໍ່ຄວາມເປັນເຈົ້າຂອງຕົນເອງ, ຄວາມຮັກຊາດ ແລະ ໃຫ້ພຣະມະຫາກະສັດແຕ່ລະພຣະອົງຖືເອົາສິນລະທຳເປັນພື້ນຖານໃນການປົກຄອງອານາຈັກຂອງຕົນສືບຕໍ່ມາ. ດ້ວຍບົດບາດສຳຄັນດັ່ງກ່າວນີ້, ວັດວາອາຮາມ ຈຶ່ງໄດ້ກາຍເປັນຄັງແຫ່ງວິຊາຄວາມຮູ້ ແລະ ເປັນສະຖາບັນສ້າງຊັບພະຍາກອນມະນຸດໃຫ້ແກ່ຊາດເຊັ່ນ: ດ້ານວັນນະຄະດີ, ດ້ານວິຈິດຕະກຳ, ດ້ານປະຕິມາກຳ, ດ້ານພາສາສາດ, ດ້ານສິລະປະຍຸດ, ດ້ານວັນນະກຳ ແລະ ອື່ນໆ ເຊິ່ງປັດຈຸບັນຍັງເຫຼືອໜ້ອຍ ຍ້ອນວ່າສັກດິນາຕ່າງດ້າວໄດ້ຮິບໂຮມລັກເອົາໜີໄປ ແລະ ຈູດເຜົາຖິ້ມເປັນຈຳນວນຫຼວງຫຼາຍ. ປະເທດຊາດ ແລະ ພຣະພຸດທະສາດສະໜາໄດ້ຜ່ານຂະບວນການວິວັດທະນາການມາຫຼາຍຮ້ອຍປີ ພຶດຕິກຳແທ້ຈິງໄດ້ຢັ້ງຢືນໃຫ້ພວກເຮົາເຂົ້າໃຈວ່າ "ພຣະພຸດທະສາດສະໜາຕັດແຍກອອກຈາກຊາດລາວບໍ່ໄດ້ ແລະ ພຣະສົງ-ສາມະເນນລາວກໍ່ຕັດແຍກອອກຈາກຍາດໂຍມລາວບັນດາເຜົ່າບໍ່ໄດ້ເຊັ່ນດຽວກັນ", ປະຫວັດສາດຂອງຊາດລາວຜ່ານມາໄດ້ບົ່ງແຈ້ງວ່າ "ພຣະສົງລາວທຸກຍຸກສະໄໝ ລ້ວນແຕ່ຖືຄັນທຸງຊາດເປັນຊີວິດຈິດໃຈ ແລະ ຖືສິລະທຳເປັນປັດໄຈປະກອບສ່ວນເຂົ້າໃນການກອບກູ້ເອກະລາດ ແລະ ສົ່ງເສີມສະໜັບສະໜູນພັກ-ລັດ ສ້າງບ້ານແປງເມືອງ ເພື່ອຄວາມຮັ່ງມີຜາສຸກຂອງຍາດໂຍມຄົນລາວບັນດາເຜົ່າ ແລະ ຄວາມສີວິໄລຂອງປະເທດຊາດ". ພຣະພຸດທະສາດສະໜາຢູ່ ສປປ ລາວ ໄດ້ມີມາແຕ່ບຸບພະການດົນນານແລ້ວ ຍາມໃດພຣະພຸດທະສາດສະໜາກໍ່ໄດ້ຕິດພັນກັບປະເທດຊາດ, ຄຳສັ່ງສອນຂອງພຣະພຸດທະນາສາດສະໜາໄດ້ຕິດພັນກັບແນວທາງນະໂຍບາຍຂອງພັກ-ລັດ ແລະ ພຣະສົງ-ສາມະເນນ ກໍ່ໄດ້ຕິດພັນກັບຍາດໂຍມລາວບັນດາເຜົ່າ. ຜ່ານມາພັກ-ລັກ ກໍ່ໄດ້ເອົາໃຈໃສ່ ແລະ ມີສຳພັນທະພາບຢ່າງສະໜິດແໜ້ນກັບພຣະພຸດທະສາດສະໜາ ກໍ່ຄື: ພຣະສົງ-ສາມະເນນ ບົນພື້ນຖານລັດຖະທຳມະນູນ ແລະ ລະບຽບກົດໝາຍຂອງ ສປປ ລາວ. (ລັດຖະທຳມະນູນປົກຄອງສົງລາວ, 2014).

ການບໍລິຫານວັດໃຫ້ມີປະສິດທິພາບຂຶ້ນຢູ່ກັບການໃຫ້ຄວາມຮ່ວມມືໃນການບໍລິຫານຂອງພຣະສົງ-ສາມະເນນໃນວັດ ເຈົ້າອາທິການວັດເປັນຜູ້ປົກຄອງຄະນະສົງ ເຊິ່ງມີໜ້າທີ່ໃນການບໍລິຫານຈັດການວັດໃນດ້ານຕ່າງໆ ເຈົ້າອາທິການວັດເປັນຜູ້ນໍາເບື້ອງຕົ້ນນັບວ່າເປັນປັດໄຈສໍາຄັນໃນການນໍາອົງການໄປສູ່ເປົ້າໝາຍແຫ່ງຄວາມສໍາເລັດ ເພາະເຈົ້າອາທິການວັດເປັນຜູ້ທີ່ມີບົດບາດສໍາຄັນໃນການຕັດສິນໃຈ, ກໍານົດນະໂຍບາຍ ແລະ ບໍລິຫານບຸກຄະລາກອນໃນອົງການເຮັດໃຫ້ວຽກງານເກີດມີປະສິດທິພາບ ໃນການປະຕິບັດວຽກງງານຂອງບຸກຄະລາກອນຈໍາເປັນຕ້ອງມີຄວາມສາມັກຄີ ແລະ ເຮັດວຽກງານໃຫ້ສອດຄ່ອງກັນ ລະຫວ່າງຜູ້ນໍາ ກັບຜູ້ຕາມ. ເຈົ້າອາທິການວັດນັ້ນມີພາລະກິດການບໍລິຫານຈັດການວັດຕາມອໍານາດໜ້າທີ່ຂອງເຈົ້າອາທິການວັດ ຕາມພາລະກິດຂອງຄະນະສົງ ທັງ 6 ດ້ານຄື: ດ້ານການປົກຄອງ, ດ້ານການເຜີຍແຜ່ສາດສະໜາທໍາ, ດ້ານການສາດສະໜາສຶກສາ, ດ້ານການສຶກສາສົງເຄາະ, ດ້ານການສາທາລະນູປາການ ແລະ ດ້ານການສາທາລະນະສົງເຄາະ. (ບຸນຊ່ວຍ ຈັນເຮົ້າ, 2004)

ວັດວຽງຈະເລີນ (ວັດວິຈິຕທັມມາຣາມ) ຕັ້ງຢູ່ບ້ານວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ, ສ້າງຕັ້ງຂຶ້ນເມື່ອປີ 2000. ຕະຫຼອດໄລຍະເວລາຫຼາຍປີຜ່ານມາທາງວັດ ແລະ ອໍານາດການປົກຄອງບ້ານທຸກພາກສ່ວນກໍ່ໄດ້ຮ່ວມແຮງຮ່ວມໃຈກັນສ້າງສາພັດທະນາອາຄານສະຖານທີ່ເຊັ່ນ: ສາລາ, ກຸດຕິ, ຫໍກອງ, ຫໍສະໝຸດ ແລະ ສະພາບແວດລ້ອມຂອງວັດມີຄວາມສວຍສົດງົດງາມ. ພ້ອມດຽວກັນນັ້ນ ກໍ່ມີພຣະສົງ-ສາມະເນນ ບໍ່ວ່າຈະເປັນພາກໃຕ້, ພາກກາງ ແລະ ພາກເໜືອມາອາໄສຢູ່ເພື່ອສຶກສາຮໍ່າຮຽນເປັນຈໍານວນຫຼວງຫຼາຍ.

ແຕ່ໃນສະພາບລວມໃນປະຈຸບັນສະຫຼຸບໄດ້ບາງບັນຫາຄື: ການບໍລິຫານ, ການຄຸ້ມຄອງ, ການນໍາພາ ແລະ ການວາງແຜນ ພ້ອມທັງຍັງຂາດການຮ່ວມມືຈາກຄະນະປົກຄອງບ້ານ, ຂາດການຈັດຕັ້ງໂຄງຮ່າງໜ້າທີ່ຮັບຜິດຊອບຂອງພຣະສົງ-ສາມະເນນ, ພຣະສົງ-ສາມະເນນຍັງຖືເບົາຕໍ່ກິດຈະວັດຂອງຕົນ, ຍ້ອນວ່າການບໍລິຫານວັດບໍ່ເປັນໄປໃນລັກສະນະລວມສົງ ພຣະສົງ-ສາມະເນນພາຍໃນວັດ ແລະ ປະຊາຊົນພາຍໃນບ້ານຂາດຄວາມເປັນເຈົ້າຂອງວັດ.

ດັ່ງນັ້ນ, ຄະນະຜູ້ຄົ້ນຄວ້າໃນນາມຜູ້ມີສ່ວນກ່ຽວຂ້ອງມີຄວາມສົນໃຈຢາກສຶກສາສະພາບການບໍລິຫານວັດ ວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ. ສຶກສາຫາແນວທາງການປັບປຸງໃນການບໍລິຫານວັດ ວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ເພື່ອໃຊ້ເປັນຂໍ້ມູນພື້ນຖານ ແລະ ເປັນບ່ອນອ້າງອີງໃຫ້ແກ່ ແນວທາງໃນການວາງແຜນ ແລະ ພັດທະນາການບໍລິຫານວັດວຽງຈະເລີນໃຫ້ນັບມື້ນັບດີຂຶ້ນ.

## 2. ອຸປະກອນ ແລະ ວິທີການ

### 2.1 ຂອບເຂດຂອງການຄົ້ນຄວ້າ

#### 1.2.1 ຂອບເຂດປະຊາກອນ

ປະຊາກອນທີ່ໃຊ້ໃນການສຶກສາຄົ້ນຄວ້າໃນຄັ້ງນີ້ໄດ້ແກ່: ປະຊາຊົນພາຍໃນບ້ານວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ໂດຍອີງຕາມການຈົດບັນທຶກຂຶ້ນສໍາມະໂນຄົວ ຂອງຫ້ອງການບ້ານວຽງຈະເລີນ ປະຈໍາປີ 2019 ຈໍານວນ 2,774 ຄົນ.

#### 1.2.2 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄົ້ນຄວ້າໃນຄັ້ງນີ້ ຜູ້ສຶກສາຄົ້ນຄວ້າໄດ້ເຮັດການສຸ່ມຈາກປະຊາກອນໂດຍນໍາໃຊ້ວິທີ ຂອງ ທາໂຣ ຢາມາເນ (Taro Yamane) ຈໍານວນ 350 ຄົນ, ຍິງ 161 ຄົນ.

#### 2.1.3 ຂອບເຂດດ້ານເນື້ອໃນ

ໃນການຄົ້ນຄວ້າຄັ້ງນີ້ ແມ່ນເປັນການສຶກສາຄວາມຄິດເຫັນຂອງປະຊາຊົນ ພາຍໃນບ້ານວຽງຈະເລີນ ຕໍ່ການບໍລິຫານວັດ ວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ. ຕາມລັດຖະທໍາມະນູນປົກຄອງສົງລາວ ສະບັບທີ່ໃຊ້ໃນປະຈຸບັນ (2004). ມາດຕາ 16: ວ່າດ້ວຍ ກິງຈັກການບໍລິຫານງານ ຂອງອົງການພຸດທະສາດສະໜາສໍາພັນລາວ ມີ 4 ດ້ານ ຄື: 1. ດ້ານກໍາມາທິການປົກຄອງສົງ, 2. ດ້ານກໍາມາທິການສຶກສາສົງ, 3. ດ້ານກໍາມາທິການເຜີຍແຜ່ສິລະທໍາ ແລະ ປະຕິບັດກໍາມະຖານ, 4. ດ້ານກໍາມາທິການສາທາລະນູປະການ.

#### 2.1.4 ຂອບເຂດດ້ານຕົວປ່ຽນ

1. ຕົວປ່ຽນຕົ້ນ ໄດ້ແກ່: ເພດ, ອາຍຸ, ລະດັບການສຶກ

ສາ ແລະ ອາຊີບ

2. ຕົວປ່ຽນຕາມ ໄດ້ແກ່ ກິດຈັກການບໍລິຫານງານຂອງອົງການພຸດທະສາດສະໜາສຳພັນລາວ ທັງ 4 ດ້ານ ຄື:

- ດ້ານກຳມາທິການປົກຄອງສົງ
- ດ້ານກຳມາທິການສຶກສາສົງ
- ດ້ານກຳມາທິການເຜີຍແຜ່ສິລະທຳ ແລະ ປະຕິບັດກຳມະຖານ
- ດ້ານກຳມາທິການສາທາລະນູປະການ

## 2.2 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ເຄື່ອງມືທີ່ໃຊ້ໃນການລວບລວມຂໍ້ມູນຄັ້ງນີ້ແມ່ນແບບສອບຖາມ ໃຊ້ສຳລັບຖາມຄວາມຄິດເຫັນຂອງຜູ້ບໍລິຫານວັດວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ເພື່ອໃຊ້ໃນການລວບລວມຂໍ້ມູນຈາກກຸ່ມຕົວຢ່າງ. ໂດຍແບ່ງອອກເປັນ 3 ຕອນ ດັ່ງນີ້:

**ຕອນທີ 1**: ເປັນແບບສອບຖາມກ່ຽວກັບຂໍ້ມູນທົ່ວໄປ ຂອງຜູ້ຕອບແບບສອບຖາມໄດ້ແກ່: ເພດ, ອາຍຸ, ວຸດທິການສຶກສາ ແລະ ອາຊີບ ເຊິ່ງເປັນແບບສອບຖາມແບບເລືອກຕອບ (Check List).

**ຕອນທີ 2**: ເປັນແບບສອບຖາມກ່ຽວກັບຄວາມຄິດເຫັນຂອງປະຊາຊົນໃນການບໍລິຫານວັດ ວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ທັງ 4 ດ້ານຄື: 1) ດ້ານກຳມາທິການປົກຄອງສົງ, 2) ດ້ານກຳມາທິການສຶກສາສົງ, 3) ດ້ານກຳມາທິການເຜີຍແຜ່ສິລະທຳ ແລະ ປະຕິບັດກຳມະຖານ ແລະ 4) ດ້ານກຳມາທິການສາທາລະນູປະການ ຊຶ່ງສ້າງເປັນແບບມາດຕາສ່ວນປະເມີນຄ່າ (Rating Scale) ແບ່ງອອກເປັນດັ່ງນີ້:

ລະດັບຄວາມຄິດເຫັນ ຕໍ່ການບໍລິຫານ ດີຫຼາຍທີ່ສຸດ ໃຫ້ຄະແນນ 5

ລະດັບຄວາມຄິດເຫັນ ຕໍ່ການບໍລິຫານ ດີຫຼາຍ ໃຫ້ຄະແນນ 4

ລະດັບຄວາມຄິດເຫັນ ຕໍ່ການບໍລິຫານ ປານກາງ ໃຫ້ຄະແນນ 3

ລະດັບຄວາມຄິດເຫັນ ຕໍ່ການບໍລິຫານ ອ່ອນ ໃຫ້ຄະແນນ 2

ລະດັບຄວາມຄິດເຫັນ ຕໍ່ການບໍລິຫານ ອ່ອນທີ່ສຸດ ໃຫ້ຄະແນນ 1

ຂໍ້ມູນທີ່ໄດ້ຈາກການຕອບແບບສອບຖາມເປັນແບບມາດຕາສ່ວນປະເມີນຄ່າ 5 ລະດັບ (Rating Scale) ວິເຄາະໂດຍໂປຣແກຣມສຳເລັດຮູບ ແລະ ແປຄ່າຄວາມໝາຍຂອງຄ່າສະເລ່ຍ ໂດຍກຳນົດເກນດັ່ງນີ້ (ພັດສະດາກອນ ພິມມະຈັນ, 2014).

ຄ່າສະເລ່ຍ 4.51 - 5.00 ໝາຍເຖິງສະພາບການບໍລິຫານ ດີຫຼາຍທີ່ສຸດ

ຄ່າສະເລ່ຍ 3.51 - 4.50 ໝາຍເຖິງສະພາບການບໍລິຫານ ດີຫຼາຍ

ຄ່າສະເລ່ຍ 2.51 - 3.50 ໝາຍເຖິງສະພາບການບໍລິຫານ ປານກາງ

ຄ່າສະເລ່ຍ 1.51 - 2.50 ໝາຍເຖິງສະພາບການບໍລິຫານ ອ່ອນ

ຄ່າສະເລ່ຍ 1.00 - 1.50 ໝາຍເຖິງສະພາບການບໍລິຫານ ອ່ອນທີ່ສຸດ

**ຕອນທີ 3**: ເປັນແບບສອບຖາມກ່ຽວກັບແນວທາງການປັບປຸງ ໃນການພັດທະນາການບໍລິຫານວັດ ວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ເປັນຄຳຖາມແບບປາຍເປີດ (Open Ended Question).

## 2.3 ວິທີການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນພາຍຫຼັງທີ່ຄະນະຜູ້ຄົ້ນຄ້ວາໄດ້ດຳເນີນການວິເຄາະຂໍ້ມູນໂດຍໃຊ້ໂປຣແກຼມຄອມພິວເຕີສຳເລັດຮູບຕາມແຕ່ລະຕອນດັ່ງນີ້:

1) ຂໍ້ມູນສ່ວນຕົວຂອງປະຊາຊົນ ຜູ້ຕອບແບບສອບຖາມໃຊ້ຄ່າສະເລຍຄວາມຖີ່ (Frequency) ແລະ ຄ່າສ່ວນຮ້ອຍ (Percentage) ແລ້ວນຳສະເໜີເປັນຕາຕາລາງ.

2) ລະດັບຄວາມຄິດເຫັນຈາກການຕອບແບບສອບຖາມຂອງປະຊາຊົນທີ່ເປັນກຸ່ມຕົວຢ່າງໃຊ້ຄ່າສະເລຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (Standard Deviation).

3) ການປຽບທຽບຄວາມຄິດເຫັນຂອງກຸ່ມຕົວຢ່າງກ່ຽວກັບການບໍລິຫານວັດ ວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນໃຊ້ສະຖິຕິທົດສອບ (t-test) ສາລັບ

ຕົວປ່ຽນຕົ້ນ ທີ່ມີ 2 ກຸ່ມຄື: ເພດ ແລະ ປຽບທຽບຄວາມຄິດເຫັນຂອງກຸ່ມຕົວຢ່າງທີ່ມີ 3 ກຸ່ມຄື: ອາຍຸ, ວຸດທິການສຶກສາ ແລະ ອາຊີບ ໂດຍໃຊ້ສະຖິຕິທົດ ສອບ (F-test) ໂດຍວິເຄາະຄວາມຜັນປ່ຽນທາງດຽວ (one-way ANOVA).

4) ແບບສອບຖາມປາຍເປີດກ່ຽວກັບແນວທາງໃນການປັບປຸງກ່ຽວກັບການບໍລິຫານວັດ ວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນໂດຍການສັງເຄາະ, ຕີຄວາມໝາຍ ແລ້ວຂຽນພັນລະນາແບບລຽງຄວາມ.

## 3. ຜົນໄດ້ຮັບ

1) ຄວາມຄິດເຫັນຕໍ່ການບໍລິຫານວັດວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ໂດຍພາບລວມຢູ່ໃນລະດັບດີຫຼາຍ ($\bar{X} = 4.29,\ S.D = 0.52$). ແຕ່ເມື່ອພິຈາລະນາໄປແຕ່ລະດ້ານແລ້ວ ເຫັນວ່າ ປະຊາຊົນມີຄວາມຄິດເຫັນຫຼາຍກວ່າໝູ່ແມ່ນດ້ານທີ 1 ຄື: ດ້ານກຳມາທິການປົກຄອງສົງ ($\bar{X}$=4.37, S.D=0.57) ແລະ ດ້ານກຳມາທິການສຶກສາສົງ, ດ້ານກຳມາທິການເຜີຍແຜ່ສິລະທຳ ແລະ ປະຕິບັດກຳມະຖານ ແລະ ດ້ານກຳມາທິການສາທາລະນູປາການ ພົບວ່າປະຊາຊົນມີຄວາມຄິດເຫັນຕໍ່ການບໍລິຫານວັດວຽງຈະເລີນ ຢູ່ໃນລະດັບດີຫຼາຍທຸກໆດ້ານ.

2) ຜົນການປຽບທຽບຄວາມຄິດເຫັນຂອງປະຊາຊົນຕໍ່ການບໍລິຫານວັດວຽງຈະເລີນ ຈຳແນກຕາມສະຖານະພາບສ່ວນຕົວ ໂດຍຈຳແນກຕາມ: ເພດ, ອາຍຸ, ລະດັບການສຶກສາ ແລະ ອາຊີບ ພົບວ່າ ມີຄວາມຄິດເຫັນແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

2) ແນວທາງໃນການປັບປຸງການບໍລິຫານວັດ ວຽງຈະເລີນ ໂດຍລວມແມ່ນ ການບໍລິຫານວັດດ້ານການປົກຄອງຄວນມີການກະຈາຍອຳນາດການປົກຄອງໄປຍັງຜູ້ທີ່ມີສ່ວນຮ່ວມໃນການປົກຄອງ ເພື່ອເຮັດໃຫ້ການບໍລິຫານວັດ ແລະ ການປົກຄອງມີປະສິດທິພາບຫຼາຍຂຶ້ນ, ມີການປະຊຸມຮ່ວມກັນທຸກຝ່າຍ ທັງພຣະ ແລະ ປະຊາຊົນ ເພື່ອຮ່ວມກັນຄິດ, ຮ່ວມຮັບຮູ້, ຮັບຟັງ ແລະ ເຂົ້າໃຈທັງສອງຝ່າຍ ແລະ ຊ່ວຍກັນແກ້ໄຂບັນຫາທີ່ເກີດຂຶ້ນ ເປັນການສ້າງສຳພັນອັນດີລະຫວ່າງວັດ ແລະ ບ້ານ ໃຫ້ມີຄວາມສະໜານສະມັກຄີຕໍ່ກັນ, ຄວນເພີ່ມບຸກຄະລາກອນທີ່ມີຄວາມຮູ້, ຄວາມເຂົ້າໃຈ ແລະ ມີປະສິດທິພາບໃນການບໍລິຫານວັດທັງຝ່າຍສົງ ແລະ ຝ່າຍປະຊາຊົນ ຂຶ້ນມາຊ່ວຍກັນເບິ່ງແຍງດູແລໃຫ້ເປັນໄປຕາມກົດລະບຽບອັນດີງາມຢ່າງທົ່ວເຖິງ, ຄວນມີນະໂຍບາຍແຜນຜັງຂອງວັດເພື່ອບົ່ງບອກເຖິງໜ້າທີ່ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບຂອງບຸກຄະລາກອນຢ່າງຈະແຈ້ງ. ຄວນສົ່ງເສີມທຶນການສຶກສາໃຫ້ກັບພຣະສົງ-ສາມະເນນທີ່ມີຄວາມຕັ້ງໃຈຮຽນທັງທາງໂລກແລະ ທາງທຳ ຄຽງຄູ່ກັນໄປຕາມຄວາມເໝາະສົມ ເພື່ອຈະໄດ້ເປັນບຸກຄະ ລາກອນທີ່ສຳຄັນໃນຂ້າງໜ້າ. ຄວນເປີດຫຼັກສູດໃນການອົບຮົມ ແລະ ເຜີຍແຜ່ພຣະພຸດທະສາດສະໜາໃຫ້ພຣະສົງ-ສາມະເນນພາຍໃນວັດ ແລະ ສະຖານທີ່ຕ່າງໆໃຫ້ທົ່ວເຖິງ. ຄວນຈັດໃຫ້ມີການສະແດງພຣະທຳມະເທດສະໜາ ແລະ ວິປັດສະນາກຳມະຖານ ການບັນຍາຍທຳມະ ຫຼື ປາຖະຄາຖາ. ການກໍ່ສ້າງ ແລະ ບູລະນະປະຕິສັງຂອນສິ່ງກໍ່ສ້າງ ແລະ ຊັບສົມບັດຂອງວັດ ຄວນມີການຮັກສາ, ສ້ອມແປງປັບປຸງ ຕຶກແຕ່ງສາດສະໜາວັດຖຸ ແລະ ສາດສະໜາສະຖານ ທີ່ມີຢູ່ແລ້ວໃຫ້ໝັ້ນຄົງຖາວອນ ແລະ ການກໍ່ສ້າງເພີ່ມເຕີມໃຫ້ເໝາະສົມລະປະແລະວັດທະນະທຳຂອງຊາດ ແລະ ຄວນສ້າງເທົ່າທີ່ຈຳເປັນຕໍ່ການຄົງໄວ້ແຫ່ງສາດສະໜາຕໍ່ໄປ.

## 4. ວິພາກຜົນ

ສະພາບການບໍລິຫານວັດວຽງຈະເລີນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ໂດຍລວມທັງ 4 ດ້ານ ຢູ່ໃນລະດັບດີຫຼາຍ ນັ້ນກໍ່ຍ້ອນວ່າ ຜູ້ບໍລິຫານວັດມີຄວາມເປັນຜູ້ນຳສູງ, ເນັ້ນການເຮັດວຽກງານເປັນທີມ ເພື່ອການເປັນຢູ່ທີ່ດີຂອງພຣະສົງ-ສາມະເນນ ແລະ ປະຊາຊົນ, ຜູ້ປົກຄອງວັດມີຈຸດປະສົງອົບຮົມສັ່ງສອນພຣະສົງ-ສາມະເນນ ແລະ ປະຊາຊົນໃຫ້ເປັນຄົນດີຂອງສັງຄົມ ພ້ອມກັບການພັດທະນາວັດໃຫ້ມີຄວາມຈະເລີນຮຸ່ງເຮືອງ, ການບໍລິຫານປົກຄອງວັດດ້ວຍຄວາມເມດຕາ, ເອື້ອຍອາລີ ຍຶດຕາມຫຼັກທຳວິໄນ ແລະ ມີລະບຽບແບບແຜນທີ່ດີ, ການປົກຄອງວັດແບບມີສ່ວນຮ່ວມ ເນັ້ນການຢູ່ຮ່ວມກັນແບບສະຫງົບຮຽບຮ້ອຍ ຕາມກົດລະບຽບຂອງວັດ, ວັດມີການອົບຮົມສັ່ງສອນໃຫ້ຄວາມຮູ້ແກ່ປະຊາຊົນທີ່ເຂົ້າມາໃນວັດ ດ້ານສິນທຳ ແລະ ຄຸນນະທຳ, ຈັດສ້າງວັດໃຫ້ເປັນບ່ອນເພິ່ງພາອາໄສຂອງປະຊາຊົນໃນການປຶກສາຫາລືແລກປ່ຽນຄວາມຮູ້ທາງດ້ານສິນທຳ

ແລະ ໃນການດຳລົງຊີວິດ, ການຈັດສ້າງວັດໃຫ້ເປັນບ່ອນສຶກສາຮຽນຮູ້ດ້ານສິນທຳ ແກ່ພຣະສົງ-ສາມະເນນ ແລະ ປະຊາຊົນທົ່ວໄປ, ວັດມີການສົ່ງເສີມພຣະສົງ-ສາມະເນນໃຫ້ໄດ້ຮັບການສຶກສາ ແລະ ພັດທະນາບຸກຄະລາກອນຢ່າງຮອບດ້ານ. ມີການອົບຮົມສັ່ງສອນ ພຣະສົງ-ສາມະເນນ ແລະ ປະຊາຊົນ ໃຫ້ເຂົ້າໃຈໃນຫຼັກທຳຄຳສອນຂອງພຣະພຸດທະສາດສະໜາ, ປະເພນີອັນດີງາມ ແລະ ປະພຶດຕົນ ເປັນແບບຢ່າງທີ່ດີຕໍ່ສັງຄົມ, ມີການຈັດສາດສະໜາພິທີງານບຸນຕ່າງໆ ແລະ ເທດສະໜາສັ່ງສອນປະຊາຊົນໃນວັນສຳຄັນຕ່າງໆ ເພື່ອໃຫ້ຮູ້ຄວາມສຳຄັນ ແລະ ຄວາມເປັນມາ, ຈັດການເຜີຍແຜ່ທຳມະຜ່ານສື່ຕ່າງໆເຊັ່ນ: ໜັງສືໄຫວ້ພຣະ, ໜັງສືທຳມະ, ອິນເຕີເນັດ ແລະ ເອກະສານຕ່າງໆ, ຈັດໃຫ້ພຣະສົງ-ສາມະເນນ ເທດສະໜາສັ່ງສອນ ແລະ ເຜີຍແຜ່ສິນທຳໃຫ້ແກ່ເດັກນ້ອຍໃນໂຮງຮຽນ ແລະ ສະຖານສຶກສາຕ່າງໆ. ມີການວາງແຜນໃນການຈັດສ້າງ ກຸດຕິ ແລະ ສິມ ພ້ອມທັງສິ່ງຂອງຕ່າງໆພາຍໃນວັດ ຢ່າງເປັນລະບຽບຮຽບຮ້ອຍ, ການບຳລຸງຮັກສາ ປັວແປງສິ່ງກໍ່ສ້າງພາຍໃນ ວັ ດໃຫ້ຄົງເດີມຕາມແບບສິລະປະ ແລະ ວັດທະນະທຳຂອງລາວ, ການພັດທະນາບໍລິເວນວັດ ໃຫ້ສະອາດຈົບງາມ, ມີປ້າຍບອກທາງເຂົ້າ ແລະ ມີລະບົບຄວາມປອດໄພພາຍໃນວັດ ເຊິ່ງໄດ້ສອດຄ່ອງກັບບົດຄົ້ນຄວ້າຂອງ ພຣະຄຣູປະລັດກິດຕິວັດ (2011) ສຶກສາຄົ້ນຄວ້າກ່ຽວກັບ ການບໍລິຫານຈັດການວັດຂອງພຣະສັງຄາທິການ ໃນ ເມືອງບາງເລນ ແຂວງນະຄອນປະຖົມ, ຜົນຂອງການສຶກສາຄົ້ນຄວ້າເຫັນວ່າ: ຄວາມຄິດເຫັນຂອງພຣະສົງທີ່ສັງກັດຢູ່ໃນເຂດປົກຄອງຄະນະສົງ ອຳເພີບາງເລນ ຈັງຫວັດນະຄອນປະຖົມ ທີ່ມີຕໍ່ການບໍລິຫານຈັດການວັດຂອງພຣະສັງຄາທິການໃນ ເມືອງບາງເລນ ແຂວງນະຄອນປະຖົມ ເຫັນວ່າ: ການບໍລິຫານຈັດການວັດຂອງພຣະສັງຄາທິການໃນ ເມືອງບາງເລນ ແຂວງນະຄອນປະຖົມ ໃນພາບລວມຢູ່ໃນລະດັບຫຼາຍ. ຜົນການປຽບທຽບການບໍລິຫານຈັດການວັດຂອງພຣະສັງຄາທິການໃນ ເມືອງບາງເລນ ແຂວງນະຄອນປະຖົມ ທົດສອບສົມມຸດຕິຖານໂດຍການວິເຄາະຄວາມແຕກຕ່າງຕົວແປ ເຫັນວ່າ: ອາຍຸ, ຈຳນວນພັນສາ ແລະ ວຸດທິການສຶກສາທາງປະລິຍັດຕິທຳມີຜົນເຮັດໃຫ້ຄວາມຄິດເຫັນຂອງພຣະສົງທີ່ສັງກັດຢູ່ໃນເຂດປົກຄອງຄະນະສົງໃນ ເມືອງບາງເລນ ແຂວງນະຄອນປະຖົມ ແຕກຕ່າງກັນ ຢ່າງມີຄ່າຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ຈຶ່ງເປັນການຍອມຮັບສົມມຸດຖານການວິໄຈ, ສ່ວນຕົວແປ ທາງດ້ານວຸດທິການສຶກສາທາງສາມັນ ແລະ ວຸດທິການສຶກສາທາງທຳນັ້ນ ບໍ່ແຕກຕ່າງກັນ ຈຶ່ງເປັນການປະຕິເສດສົມມຸດຕິຖານທີ່ຕັ້ງໄວ້. ສອດຄ່ອງກັບບົດຄົ້ນຄວ້າຂອງ ພຣະຄຣູວິສຸດທາບັນທະຄຸນ (2011) ສຶກສາຄົ້ນຄວ້າກ່ຽວກັບ ການບໍລິຫານຈັດການວັດເຂົາຊ່ອງພຣານ ແຂວງຣາຊບູລີ ຜົນການສຶກສາ ເຫັນວ່າ: ປະຊາຊົນມີຄິດເຫັນຕໍ່ການບໍລິຫານຈັດການວັດເຂົາຊ່ອງພຣານ ແຂວງຣາຊບູລີ ໂດຍລວມຢູ່ໃນລະດັບຫຼາຍ. ການປຽບທຽບຄວາມຄິດເຫັນຂອງປະຊາຊົນຕໍ່ການບໍລິຫານຈັດການວັດເຂົາຊ່ອງພຣານ ແຂວງຣາຊບູລີ ຈຳແນກຕາມສະຖານະພາບສ່ວນບຸກຄົນ ເຫັນວ່າ ປະຊາຊົນທີ່ມີເພດ, ອາຍຸ, ລະດັບການສຶກສາ, ອາຊີ ແລະ ປະສົບການໃນເຂົ້າວັດທີ່ຕ່າງກັນ ມີຄວາມຄິດບໍ່ຕ່າງກັນ ຈຶ່ງປະຕິເສດສົມມຸດຖານທີ່ຕັ້ງໄວ້ ແລະ ສອດຄ່ອງກັບບົດຄົ້ນຄວ້າຂອງ ພຣະຄຣູວິໄນ ທອນຖະວິລຮຽບຮ້ອຍ (2014) ສຶກສາຄົ້ນຄວ້າກ່ຽວກັບ ການບໍລິຫານຈັດການວັດຂອງເຈົ້າອາວາດໃນເຂດປົກຄອງຄະນະສົງ ເມືອງເມືອງ ແຂວງການຈະນະບູລີ ຜົນການສຶກສາຄົ້ນຄວ້າເຫັນວ່າ: ລະດັບການບໍລິຫານຈັດການວັດຂອງເຈົ້າອາວາດໃນເຂດປົກຄອງຄະນະສົງ ເມືອງເມືອງ ແຂວງການຈະນະບູລີ ຕາມເກນສຳນັກງານພຣະພຸດທະສາດສະໜາແຫ່ງຊາດ ໂດຍລວມຢູ່ໃນລະດັບປານກາງ. ແນວທາງໃນການພັດທະນາ ການບໍລິຫານຈັດການວັດຂອງເຈົ້າອາທິການວັດໃນເຂດປົກຄອງຄະນະສົງ ເມືອງເມືອງ ແຂວງການຈະນະບູລີ ຕາມເກນສຳນັກງານພຣະພຸດທະສາດສະໜາແຫ່ງຊາດ ໃນແຕ່ລະດັບຄື: ດ້ານສາທາລະນູປະການ ຄວນມີຜັງໃນການກໍ່ສ້າງຢ່າງຊັດເຈນ ແລະ ມີການວາງແຜນການບໍລິຫານຈັດການພື້ນທີ່ໃນການປຸກສິ່ງກໍ່ສ້າງໃນອະນາຄົດຢ່າງຮອບຄອບ, ດ້ານການປົກຄອງ ຄວນແຕ່ງຕັ້ງຄະນະດາເນີນງານບໍລິຫານງານພາຍໃນວັດໃຫ້ເປັນໄປຕາມລະບຽບ ແລະ ຂໍ້ບັງຄັງຂອງຄະນະສົງຢ່າງເປັນຮູບປະທຳ, ດ້ານການເຜີຍແຜ່ ຄວນຈັດຕັ້ງໜ່ວຍງານທີ່ດູແລວຽກງານດ້ານເຜີຍແຜ່ພາຍໃນວັດຢ່າງຊັດເຈນ ໂດຍສະໜັບສະໜູນງົບປະມານ ແລະ ກຳລັງ

ຢ່າງພຽງພໍ, ດ້ານການສຶກສາສົງ ຄວນຈັດຕັ້ງກອງທຶນເພື່ອການສຶກສາ ພຣະປະຣິຍັດຕິທຳ ສະໜັບສະໜູນສື່ ວັດຖຸອຸປະກອນທາງການສຶກສາແກ່ພຣະສົງ-ສາມະເນນ ແລະ ສົ່ງເສີມການສຶກສາແກ່ຄະລືຫັດ (ພໍ່ອອກແມ່ອອກ), ດ້ານການສຶກສາສົງເຄາະ ຄວນຕັ້ງກອງທຶນສົງເຄາະເພື່ອການສຶກສາສູນກາງສຶກສາພຣະພຸດທະສາດສະໜາອັນອາທິດ ແລະ ສົ່ງເສີມການສຶກສາ ພຣະປະຣິຍັດຕິທຳ ພະແນກສາມັນສຶກສາ ແລະ ດ້ານສາທາລະນະສົງເຄາະ ຄວນອຳນວຍຄວາມສະດວກໃຫ້ແກ່ປະຊາຊົນທີ່ເຂົ້າມາຮ່ວມພິທີກຳໃນວັນສຳຄັນທາງສາດສະໜາ ແລະ ສະໜັບສະໜູນກິດຈະການຂອງລັດ ຫຼື ເອກະຊົນ ທີ່ເປັນໄປເພື່ອສາທາລະນະປະໂຫຍດແກ່ມວນຊົນທັງຫຼາຍ.

## 5. ສະຫຼຸບ

1) ປະຊາຊົນມີຄວາມຄິດເຫັນຕໍ່ການບໍລິຫານວັດວຽງຈະເລີນ ໂດຍພາບລວມຢູ່ໃນລະດັບດີຫຼາຍ ແລະ ແຕ່ລະດ້ານ ກໍ່ຢູ່ໃນລະດັບດີຫຼາຍ.

2) ຜົນການປຽບທຽບຄວາມຄິດເຫັນຂອງປະຊາຊົນຕໍ່ການບໍລິຫານວັດວຽງຈະເລີນ ຈຳແນກຕາມສະຖານະພາບສ່ວນຕົວ ເຊັ່ນ: ເພດ, ອາຍຸ, ລະດັບການສຶກສາ ແລະ ອາຊີບ ພົບວ່າ ມີຄວາມຄິດເຫັນແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

3) ແນວທາງໃນການປັບປຸງການບໍລິຫານວັດວຽງຈະເລີນ ໂດຍລວມແມ່ນ ການບໍລິຫານວັດດ້ານການປົກຄອງ, ມີການປະຊຸມຮ່ວມກັນທຸກຝ່າຍ, ຄວນມີນະໂຍບາຍແຜນຜັງຂອງວັດເພື່ອບົ່ງບອກເຖິງໜ້າທີ່ຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບຂອງບຸກຄະລາກອນຢ່າງຈະແຈ້ງ, ຄວນສົ່ງເສີມທຶນການສຶກສາໃຫ້ກັບພຣະສົງ-ສຳມະເນນທີ່ມີຄວາມຕັ້ງໃຈຮຽນທັງທາງໂລກ ແລະ ທາງທຳ, ຄວນເປີດຫຼັກສູດໃນການອົບຮົມ ແລະ ເຜີຍແຜ່ພຣະພຸດທະສາດສະໜາໃຫ້ພຣະສົງ-ສາມະເນນພາຍໃນວັດ ແລະ ສະຖານທີ່ຕ່າງໆໃຫ້ທົ່ວເຖິງ, ຄວນຈັດໃຫ້ມີການສະແດງພຣະທຳມະເທດສະໜາ ແລະ ວິປັດສະນາກຳມະຖານ ການບັນຍາຍທຳມະ ຫຼື ປາຖະຄາຖາ, ການກໍ່ສ້າງ ແລະ ບູລະນະປະຕິສັງຂອນສິ່ງກໍ່ສ້າງ ແລະ ຊັບສົມບັດຂອງວັດ ແລະ ການກໍ່ສ້າງເພີ່ມເຕີມໃຫ້ເໝາະສົມກັບສິລະປະ ແລະ ວັດທະນະທຳຂອງຊາດ.

## 6. ຂໍ້ຂັດແຍ່ງ

ພວກຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ພວກຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບ.

## 7. ເອກະສານອ້າງອີງ


ກອງພຸດທະສາດສະໜາສະຖານ. (2542). ລານວັດ ລານໃຈ ລານກິລາ. ກຸງເທບມະຫານະຄອນ:ໂຮງພິມການສາດສະໜາ.

ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວປະເທດສະໄໝທີVI. (2016). ນະຄອນຫຼວງວຽງຈັນ.

ກິລະຕິ ສີວິຊຽນ. (2528). ອະດີດ ປະຈຸບັນ ແລະ ອະນາຄົດ ແຫ່ງບົດບາດຂອງສັງຄົມວັດໃນການສະແຫວງຫາເສັ້ນທາງພັດທະນາຊົນນະບົດຂອງພຣະສົງໄທ. ກຸງເທບມະຫານະຄອນ: ໂຮງພິມການສາດສະໜາ.

ຂັນມະນີ ກົມມະນີວັນ. (2017). ເອກະສານປະກອບການສອນ ວິຊາການບໍລິຫານເບື້ອງຕົ້ນ. ນະຄອນຫຼວງວຽງຈັນ: ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.

ສົມເດັດພຣະມະຫາສະມະເຈົ້າ ກົມພຣະຍາວະຊິລະຍານະວະໂລດ. (2540). ຕຳນານວັດບໍວອນນິເວດວິຫານ. ກຸງເທບມະຫານຄອນ: ໂຮງພິມມະຫາມະກຸດລາດຊະວິທະຍາໄລ.

ສຳນັກງານພຣະພຸດທະສາດສະໜາແຫ່ງຊາດ. (2546). ວັດພັດທະນາ 46. ກຸງເທບມະຫານະຄອນ: ໂຮງພິມສຳນັກງານພຣະພຸດທະສາດສະໜາ.

ຄະລຸນີ ຍານວັດທະນາ ແລະ ຄະນະ. (2545). ຄວາມສຳເລັດໃນການປະຕິບັດພາລະກິດຂອງວັດ ກໍລະນີສຶກສາ: ວັດອຳພະວັນ. ກຸງເທບມະຫານະຄອນ: ໂຮງພິມມະຫາຈຸລາລົງກອນລາດຊະວິທະຍາໄລ.

ລັດຖະທຳມະນູນປົກຄອງສົງລາວ. (2014). ຄາຜາລົບ ແລະ ບົດບັນຍັດທົ່ວໄປ. ອົງການພຣະພຸດທະສາດ

ສະໜາສຳພັນລາວ.

ທິນະພັນ ນາຄະຕະ. (2533). ການເມືອງການບໍລິຫານໄທ: ພາລະຂອງຊາດ. ກຸງເທບມະຫານະຄອນ: ສຳນັກພິມແຫ່ງຈຸລາລົງກອນ.

ທຳມະນູນປົກຄອງສົງລາວ ມາດຕາ 16: ກົງຈັກບໍລິຫານງານຂອງອົງການພຸດທະສາດສະໜາສຳພັນລາວ. (2547). ອົງການພຸດທະສາດສະໜາສຳພັນລາວ.

ບຸນສີ ພານະຈິດ. (2545). ຄວາມສຳເລັດໃນການປະຕິພາລະກິດຂອງວັດ: ສຶກສາສະເພາະກໍລະນີ ວັດສວນແກ້ວ ເມືອງບາງໃຫຍ່ ແຂວງນົນທະບູລີ. ກຸງເທບມະຫານະຄອນ: ໂຮງພິມມະຫາຈຸລາລົງກອນລາດຊະວິທະຍາໄລ.

ບຸນຊ່ວຍ ຈັນເຮົ້າ. (2001). ພຶດຕິກຳການບໍລິຫານຂອງເຈົ້າອາວາດທີ່ສົ່ງຜົນຕໍ່ການປະຕິບັດງານວັດໃນເຂດການປົກຄອງຄະນະສົງຄະນະຈັງຫວັດ ກຸງເທບມະຫານະຄອນ[ວິທະຍານິພົນ]. ມະຫາວິທະຍາໄລສີນະຄະລິນວິໂລດ.

ບຸນຊ່ວຍ ຈັນເຮົ້າ. (2004). ພຶດຕິກຳການບໍລິຫານຂອງເຈົ້າອາວາດທີ່ສົ່ງຜົນຕໍ່ການປະຕິບັດງານວັດໃນເຂດການປົກຄອງຄະນະສົງຈັງຫວັດກຸງເທບມະຫານະຄອນ [ວິທະຍານິພົນ]. ບັນດິດວິທະຍາໄລ: ມະຫາວິທະຍາໄລສິລະປາກອນ.

ພຣະຄຣູວິສຸດທານັນທະຄຸນ. (2011). ການບໍລິຫານຈັດການວັດເຂົາຊ່ອງພານ ແຂວງຣາຊບູລີ [ວິທະຍານິພົນ]. ມະຫາວິທະຍາໄລຈຸລາລົງກອນຣາຊວິທະຍາໄລ.

ພຣະຄຣູວິໄນທອນຖະວິລ ຮຽບຮ້ອຍ. (2014). ການບໍລິຫານຈັດາການວັດຂອງເຈົ້າອາວາດໃນເຂດປົກຄອງຄະນະສົງ ເມືອງເມືອງ ແຂວງການຈະນະບູລີ [ວິທະຍານິພົນ]. ມະຫາວິທະຍາໄລຣາຊພັດທົນບູລີ.